ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1238 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 23 JUN 2015

# ຂໍ້ຕົກລົງ
# ວ່າດ້ວຍ ການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ສປປ ລາວ

- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມດຳລັດວ່າດ້ວຍ ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມດຳລັດວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ສປປ ລາວ ເພື່ອອຳນວຍຄວາມສະດວກ ແກ່ການເຄື່ອນຍ້າຍສິນຄ້າຜ່ານແດນ ແລະ ດຳເນີນການເຄື່ອນຍ້າຍໂດຍຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ແນໃສ່ສົ່ງເສີມການພັດທະນາວຽກງານອຸດສາຫະກຳ ແລະ ການຄ້າ ປະກອບສ່ວນແກ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

### ມາດຕາ 2 ການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ

ການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ແມ່ນການເຄື່ອນຍ້າຍສິນຄ້າຈາກປະເທດໃດໜຶ່ງ ຜ່ານແດນ ສປປ ລາວ ໄປຍັງປະເທດທີສາມ ໂດຍບໍ່ມີການຖ່າຍຖ່າຍສິນຄ້າຢູ່ ສປປ ລາວ ເກີນໜຶ່ງຄັ້ງ. ໃນກໍລະນີສຸກເສີນທີ່ອາດມີການຖ່າຍຖ່າຍ ພາຍໃຕ້ກົດໝາຍພາສີ ແລະ ກົດໝາຍວ່າດ້ວຍ ການຂົນສົ່ງທາງບົກ ຂອງ ສປປ ລາວ, ສິນຄ້າຕ້ອງຢູ່ໃນສະພາບເດີມ ແລະ ຖືກຈັດສົ່ງຕາມເສັ້ນທາງ ແລະ ວັນເວລາ ທີ່ໄດ້ກຳນົດໄວ້. ການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ຕ້ອງຜ່ານດ່ານສາກົນເທົ່ານັ້ນ ໂດຍຢູ່ພາຍໃຕ້ການ

ຕິດຕາມ ຂອງເຈົ້າໜ້າທີ່ພາສີ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 3 ອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ສິນຄ້າຄຸ້ມຄອງ** ໝາຍເຖິງ ສິນຄ້າທີ່ນອນຢູ່ໃນລາຍການສິນຄ້າ ທີ່ຕ້ອງຂໍອະນຸຍາດນໍາເຂົ້າ ຫຼື ສົ່ງອອກ ແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ.
2. **ໃບອະນຸຍາດເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ** ໝາຍເຖິງ ເອກະສານຢັ້ງຢືນເຫັນດີໃຫ້ເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ສາມາດນໍາໃຊ້ໄດ້ຕາມກໍານົດເວລາທີ່ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ສປປ ລາວ.

## ໝວດທີ 2
## ການອອກໃບອະນຸຍາດເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ

**ມາດຕາ 5 ຜູ້ທີ່ມີເງື່ອນໄຂໃນການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ**

ຜູ້ທີ່ມີເງື່ອນໄຂໃນການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ແມ່ນຫົວໜ່ວຍທຸລະກິດພາຍໃນ ແລະ ຕ່າງປະເທດທີ່ດໍາເນີນທຸລະກິດ ບໍລິການຈັດສົ່ງ ແລະ ຂົນສົ່ງສິນຄ້າ ລະຫວ່າງປະເທດ ແລະ ຜ່ານແດນ.

**ມາດຕາ 6 ການປະກອບເອກະສານ**

ຜູ້ດໍາເນີນການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ ສປປ ລາວ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ;
2. ສັນຍາຊື້-ຂາຍສິນຄ້າ ລະຫວ່າງ ຜູ້ຂາຍສິນຄ້າຢູ່ປະເທດຕົ້ນທາງ ແລະ ຜູ້ຊື້ສິນຄ້າຢູ່ປະເທດປາຍທາງ;
3. ໃບທະບຽນວິສາຫະກິດ ຂອງຜູ້ດໍາເນີນການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ;
4. ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ ຫຼື ເອກະສານອື່ນທີ່ຢັ້ງຢືນການມອບພັນທະອາກອນປະຈໍາປີ;
5. ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ (ເຊັນໂດຍຜູ້ຂາຍ);
6. ໃບມອບສິດຈາກເຈົ້າຂອງສິນຄ້າໃຫ້ຜູ້ປະກອບການຂົນສົ່ງສິນຄ້າຄຸ້ມຄອງຜ່ານແດນ;
7. ສັນຍາ ກ່ຽວກັບການຄໍ້າປະກັນການຂົນສົ່ງສິນຄ້າຜ່ານແດນສາກົນ ກັບ ກົມພາສີ, ກະຊວງການເງິນ.